# ກົດໝາຍວ່າດ້ວຍສິດທິຂອງຄົນ
# ເຈັບໃນສູນຜ່າຕັດຄົນເຈັບນອກໂຮງໝໍຂອງຣັຖມິນນີໂຊຕາ

## ສະພານິຕິບັນຍັດຣັຖມິນນີໂຊຕາ 2004

## 144.651 ຄົນເຈັບແລະຜູ້ຢູ່ອາໄສໃນສະຖານພະຍາບານສຸຂະພາບ; ກົດໝາຍວ່າດ້ວຍສິດທິຕ່າງໆ.

ຂໍ້ຍ່ອຍທີ 1. **ເຈດຕະນາຂອງກົດໝາຍ.** ມັນແມ່ນເຈດຕະນາຂອງສະພານິຕິບັນຍັດແລະຈຸດປະສົງຂອງຖະແຫຼງການນີ້ທີ່ຈະສົ່ງເສີມຜົນປະໂຫຍດ ແລະຄວາມເປັນຢູ່ດີຂອງບັນດາຄົນເຈັບທີ່ຢູ່ໃນສະຖານພະຍາບານຕ່າງໆ. ບໍ່ມີສະຖານພະຍາບານໃດທີ່ຈະສາມາດຮຽກຮ້ອງໃຫ້ຄົນເຈັບສະຫຼະສິດທິເຫຼົ່ານີ້ໂດຍອ້າງເປັນເງື່ອນໄຂໃນການຮັບເຂົ້າປິ່ນປົວໃນສະຖານພະຍາບານ. ຜູ້ປົກຄອງ ຫຼື ຜູ້ຄຸ້ມຄອງຄົນເຈັບ ຫຼື, ໃນກໍລະນີທີ່ບໍ່ມີຜູ້ປົກຄອງ ຫຼື ຜູ້ຄຸ້ມຄອງ, ບຸກຄົນທີ່ສົນໃຈ, ສາມາດຊອກຫາເອົາການບັງຄັບໃຊ້ສິດທິເຫຼົ່ານີ້ໄດ້ໃນນາມຂອງຄົນເຈັບ. ບຸກຄົນທີ່ສົນໃຈຍັງອາດຊອກເອົາການບັງຄັບໃຊ້ສິດທິເຫຼົ່ານີ້ໃນນາມຂອງຄົນເຈັບທີ່ມີຜູ້ປົກຄອງ ຫຼື ຜູ້ຄຸ້ມຄອງ ຜ່ານທາງອົງການບໍລິຫານ ຫຼື ສານພິສູດພິໄນກໍາ ຫຼື ສານຂອງຄາວຕີ້ໂດຍໃຫ້ພິພາກສາຕັດສິນການເປັນຜູ້ປົກຄອງ ຫຼື ການເປັນຜູ້ຄຸ້ມຄອງ. ໂດຍຂຶ້ນຢູ່ກັບຜົນອອກມາຂອງການດໍາເນີນຄະດີໃນດ້ານການບັງຄັບຄະດີ ທາງສະຖານ

ພະຍາບານອາດປະຕິບັດຕາມຄຳແນະນຳຂອງຜູ້ປົກຄອງ ຫຼື ຜູ້ຄຸ້ມຄອງໂດຍສຸດຈະລິດໃຈ. ມັນແມ່ນເຈດຕະນາຂອງມາດຕານີ້ທີ່ວ່າ ສິດທິຂັ້ນພື້ນຖານທາງສາສະໜາແລະພົນລະເມືອງຂອງຄົນເຈັບ, ລວມ ເຖິງ ສິດທິໃນການຕັດສິນໃຈສ່ວນຕົວຢ່າງເປັນອິດສະຫຼະ ແລະການມີ ທາງເລືອກຕ່າງໆ, ຈະບໍ່ຖືກລະເມີດ ແລະວ່າສະຖານພະຍາບານຄວນ ຊຸກຍູ້ແລະຊ່ວຍເຫຼືອໃນການນຳໃຊ້ສິດທິເຫຼົ່ານີ້ຢ່າງເຕັມສ່ວນເທົ່າທີ່ ເປັນໄປໄດ້.

**ນິຍາມ**

ຂໍ້ຍ່ອຍທີ 2. **ນິຍາມ.** ສຳລັບຈຸດປະສົງຂອງຂໍ້ຍ່ອຍທີ 4 ຫາ 9, 12, 13, 15, 16, ແລະ 18 ຫາ 20, ຄຳວ່າ "ຄົນເຈັບ" ຍັງໝາຍເຖິງ ບຸກຄົນ ທີ່ຮັບເອົາການບໍລິການດູແລສຸຂະພາບທີ່ສູນຜ່າຕັດຄົນເຈັບນອກ ໂຮງໝໍ.

ຂໍ້ຍ່ອຍທີ 4. **ຂໍ້ມູນກ່ຽວກັບສິດທິຕ່າງໆ.** ໃນເວລາຮັບເຂົ້າປິ່ນປົວ, ຄົນເຈັບຄວນຈະໄດ້ຮັບການບອກກ່າວເຖິງສິດທິທາງກົດໝາຍເພື່ອເປັນ ການປົກປ້ອງເຂົາເຈົ້າໃນລະຫວ່າງການນອນປິ່ນປົວໃນສະຖານພະຍາ ບານ ຫຼື ຕະຫຼອດເວລາທີ່ຮັບການປິ່ນປົວຮັກສາໃນຊຸມຊົນ ແລະວ່າ ສິດທິເຫຼົ່ານີ້ໄດ້ຮັບການບັນລະຍາຍເປັນລາຍລັກອັກສອນເຖິງສິດທີ່ ກ່ຽວຂ້ອງ ແລະຄວາມຮັບຜິດຊອບຕ່າງໆ ທີ່ກຳນົດໄວ້ໃນພາກສ່ວນນີ້.

ການອຳນວຍຄວາມສະດວກທີ່ສົມເຫດຜົນຄວນມີໃຫ້ສຳລັບບຸກຄົນທີ່ມີບັນຫາດ້ານການສື່ສານ, ແລະບັນດາບຸກຄົນທີ່ເວົ້າພາສາອື່ນທີ່ບໍ່ແມ່ນພາສາອັງກິດ.ນະໂຍບາຍຕ່າງໆ ໃນປັດຈຸບັນຂອງສະຖານພະຍາບານ, ການສອບສວນຂອງຣັຖ ແລະອົງການດູແລສຸຂະພາບໃນທ້ອງຖິ່ນ, ແລະຄຳອະທິບາຍເພີ່ມເຕີມຂອງຖະແຫຼງການວ່າດ້ວຍສິດທິນັ້ນຄວນມີໃຫ້ແກ່ບັນດາຄົນເຈັບ, ຜູ້ປົກຄອງຂອງເຂົາເຈົ້າ ຫຼື ຕົວແທນທີ່ເຂົາເຈົ້າເປັນຜູ້ເລືອກ ເມື່ອມີການຮ້ອງຂໍຢ່າງສົມເຫດຜົນໄປເຖິງຜູ້ບໍລິຫານ ຫຼື ເຈົ້າໜ້າທີ່ທີ່ໄດ້ຮັບມອບອຳນາດ, ໂດຍໃຫ້ສອດຄ່ອງກັບບົດບັດຍັດທີ 13, ກົດໝາຍວ່າດ້ວຍແນວທາງປະຕິບັດດ້ານຂໍ້ມູນ, ແລະມາດຕາທີ 626,557, ທີ່ກ່ຽວກັບຜູ້ໃຫຍ່ທີ່ດ້ອຍໂອກາດ.

ຂໍ້ຍ່ອຍທີ 5. **ການປິ່ນປົວດ້ວຍຄວາມເອື້ອເຟື້ອ.** ບັນດາຄົນເຈັບມີສິດທິທີ່ຈະໄດ້ຮັບການປະຕິບັດດ້ວຍຄວາມເອື້ອເຟື້ອແລະຄວາມເຄົາລົບຕໍ່ຄວາມເປັນບຸກຄົນຂອງເຂົາເຈົ້າຈາກພະນັກງານ ຫຼື ບຸກຄົນທີ່ໃຫ້ບໍລິການໃນສະຖານພະຍາບານ.

ຂໍ້ຍ່ອຍທີ 6. **ການດູແລສຸຂະພາບທີ່ເໝາະສົມ.** ຄົນເຈັບຄວນມີສິດທີ່ຈະໄດ້ຮັບການປິ່ນປົວຮັກສາແລະດູແລໂດຍອີງໃສ່ຄວາມຕ້ອງການສ່ວນບຸກຄົນ.

ຂໍ້ຍ່ອຍທີ 7. **ຂໍ້ມູນສ່ວນຕົວຂອງແພດໝໍ.** ຄົນເຈັບຄວນມີ ຫຼື ໄດ້ຮັບຂໍ້ມູນເປັນລາຍລັກອັກສອນກ່ຽວກັບຊື່, ທີ່ຢູ່ທຸລະກິດ, ເບີໂທຣະສັບ, ແລະຄວາມຊ່ຽວຊານສະເພາະ, ຖ້າວ່າມີ, ຂອງແພດໝໍທີ່ຮັບຜິດຊອບໃນການປະສານງານການເບິ່ງແຍງເຂົາເຈົ້າ. ໃນກໍລະນີທີ່ເຫັນວ່າບໍ່ສົມຄວນໃນທາງການແພດ, ຕາມທີ່ແພດຜູ້ເບິ່ງແຍງໄດ້ບັນທຶກໄວ້ໃນປະຫວັດການເບິ່ງແຍງຂອງຄົນເຈັບ, ຂໍ້ມູນດັ່ງກ່າວນັ້ນຄວນເອົາໃຫ້ແກ່ຜູ້ປົກຄອງຂອງຄົນເຈັບ ຫຼື ບຸກຄົນອື່ນທີ່ໄດ້ຮັບມອບໝາຍຈາກຄົນເຈັບໃນຖານະເປັນຕົວແທນຂອງເຂົາ.

ຂໍ້ຍ່ອຍທີ 8. **ຄວາມສຳພັນກັບບໍລິການສຸຂະພາບອື່ນໆ.**ບັນດາຄົນເຈັບທີ່ໄດ້ຮັບການບໍລິການຈາກຜູ້ໃຫ້ບໍລິການພາຍນອກມີສິດ, ຖ້າຫາກຮ້ອງຂໍ, ທີ່ຈະໄດ້ຮັບການບອກກ່າວເຖິງ ຂໍ້ມູນລັກສະນະສ່ວນຕົວຂອງຜູ້ໃຫ້ບໍລິການນັ້ນ. ຂໍ້ມູນດັ່ງກ່າວນີ້ລວມເຖິງ ຊື່ຂອງຜູ້ໃຫ້ບໍລິການພາຍນອກ, ທີ່ຢູ່ ແລະຄຳອະທິບາຍລັກສະນະຂອງການບໍລິການທີ່ອາດໃຫ້. ໃນກໍລະນີທີ່ເຫັນວ່າບໍ່ສົມຄວນໃນທາງການແພດ, ຕາມທີ່ແພດຜູ້ເບິ່ງແຍງໄດ້ບັນທຶກໄວ້ໃນປະຫວັດການເບິ່ງແຍງຂອງຄົນເຈັບ, ຂໍ້ມູນດັ່ງກ່າວນັ້ນຄວນເອົາໃຫ້ແກ່ຜູ້ປົກຄອງຂອງຄົນເຈັບ ຫຼື ບຸກຄົນອື່ນທີ່ໄດ້ຮັບມອບໝາຍຈາກຄົນເຈັບໃນຖານະເປັນຕົວແທນຂອງເຂົາ.

ຂໍ້ຍ່ອຍທີ 9. **ຂໍ້ມູນກ່ຽວກັບການປິ່ນປົວ.** ຄົນເຈັບຄວນໄດ້ຮັບຂໍ້ມູນປັດຈຸບັນທີ່ຄົບຖ້ວນຈາກໝໍຂອງເຂົາເຈົ້າທີ່ກ່ຽວກັບ ການບົ່ງມະຕິ

ພະຍາດຂອງເຂົາເຈົ້າ, ການປິ່ນປົວ, ທາງເລືອກອື່ນ, ຄວາມສ່ຽງ ຕ່າງໆ ແລະການຄາດໝາຍອາການຂອງພະຍາດ ຕາມທີ່ກໍານົດໂດຍ ໜ້າທີ່ທາງກົດໝາຍ ຂອງແພດໝໍທີ່ຈະຕ້ອງເປີດເຜີຍຂໍ້ມູນດັ່ງກ່າວນີ້. ຂໍ້ມູນນີ້ຄວນມີຮູບແບບແລະພາສາທີ່ຄົນເຈັບສາມາດເຂົ້າໃຈໄດ້ຢ່າງພໍ ສົມຄວນ. ຄົນເຈັບສາມາດມີຄົນຢູ່ນໍາ ເຊັ່ນ ສະມາຊິກໃນຄອບຄົວ ຫຼື ຕົວແທນອື່ນໆ ທີ່ເລືອກໄວ້, ຫຼື ທັງສອງ. ຂໍ້ມູນນີ້ຄວນປະກອບດ້ວຍ ຜົນການປິ່ນປົວໃນທາງການແພດ ຫຼື ຜົນທາງຈິດໃຈທີ່ສໍາຄັນ ແລະ ທາງເລືອກສໍາຮອງອື່ນໆ. ໃນກໍລະນີທີ່ເຫັນວ່າບໍ່ສົມຄວນໃນທາງການ ແພດ, ຕາມທີ່ແພດຜູ້ເບິ່ງແຍງໄດ້ບັນທຶກໄວ້ໃນປະຫວັດການເບິ່ງແຍງ ຂອງຄົນເຈັບ, ຂໍ້ມູນດັ່ງກ່າວນັ້ນຄວນເອົາໃຫ້ແກ່ຜູ້ປົກຄອງຂອງຄົນເຈັບ ຫຼື ບຸກຄົນອື່ນທີ່ໄດ້ຮັບມອບໝາຍຈາກຄົນເຈັບໃນຖານະເປັນຕົວແທນ ຂອງເຂົາ. ບຸກຄົນມີສິດທີ່ຈະປະຕິເສດຂໍ້ມູນນີ້.

ຄົນເຈັບທຸກຄົນທີ່ທົນທຸກທໍລະມານຈາກມະເຮັງເຕົ້ານົມໃນຮູບແບບໃດໆ ຄວນໄດ້ຮັບການແຈ້ງບອກຢ່າງຄົບຖ້ວນ, ກ່ອນ ຫຼື ໃນເວລາທີ່ຮັບເຂົ້າ ປິ່ນປົວ ແລະໃນລະຫວ່າງການພັກອາໄສຂອງເຂົາ, ເຖິງວິທີການ ປິ່ນປົວທີ່ມີປະສິດທິພາບອື່ນໆ ທັງໝົດທີ່ແພດໝໍຜູ້ປິ່ນປົວນັ້ນມີຄວາມຮູ້ ດີ, ລວມເຖິງ ການຜ່າຕັດ, ການສ່ອງລັງສີ, ຫຼື ການປິ່ນປົວໂດຍໃຊ້ ເຄມີບໍາບັດ ຫຼື ການໃຊ້ວິທີການປິ່ນປົວຫຼາຍແບບຮ່ວມກັນ ແລະຄວາມ ສ່ຽງທີ່ກ່ຽວຂ້ອງກັບວິທີການປິ່ນປົວແຕ່ລະວິທີນັ້ນ.

ຂໍ້ຍ່ອຍທີ 12. **ສິດທິໃນການປະຕິເສດການເບິ່ງແຍງ.**ຄົນເຈັບທີ່ມີຄວາມສາມາດຄວນມີສິດທີ່ຈະປະຕິເສດການປິ່ນປົວໂດຍອີງໃສ່ຂໍ້ມູນທີ່ກຳນົດໄວ້ໃນຂໍ້ຍ່ອຍທີ 9.ໃນກໍລະຄົນເຈັບບໍ່ສາມາດເຂົ້າໃຈສະພາບການຕ່າງໆ ແຕ່ຍັງບໍ່ໄດ້ຖືກວິນິດໄສຕັດສິນວ່າຂາດຄວາມສາມາດ, ຫຼື ເມື່ອຂໍ້ກຳນົດທາງກົດໝາຍຈຳກັດສິດທິໃນການປະຕິເສດການປິ່ນປົວ, ເງື່ອນໄຂ ແລະສະພາບການຕ່າງໆ ຄວນໄດ້ຮັບການບັນທຶກໄວ້ຢ່າງຄົບຖ້ວນໂດຍແພດໝໍທີ່ເບິ່ງແຍງໃນປະຫວັດການປິ່ນປົວຂອງຄົນເຈັບ.

ຂໍ້ຍ່ອຍທີ 13. **ການຄົ້ນຄວ້າວິໄຈທີ່ເປັນການທົດລອງ.** ຕ້ອງມີການຂໍເອົາຄຳຍິນຍອມທີ່ເປັນລາຍລັກອັກສອນຈາກຄົນເຈັບກ່ອນທີ່ຄົນເຈັບຈະເຂົ້າຮ່ວມໃນການທົດລອງຄົ້ນຄວ້າ. ຄົນເຈັບມີສິດທີ່ຈະປະຕິເສດການເຂົ້າຮ່ວມ. ທັງໜັງສືໃຫ້ຄຳຍິນຍອມແລະການປະຕິເສດຄວນໄດ້ຮັບການບັນທຶກໄວ້ໃນ ປະຫວັດການເບິ່ງແຍງຂອງບຸກຄົນ.

ຂໍ້ຍ່ອຍທີ 15. **ຄວາມເປັນສ່ວນຕົວໃນດ້ານການປິ່ນປົວ.** ຄົນເຈັບຄວນມີສິດທີ່ຈະໄດ້ຮັບຄວາມເຄົາລົບແລະມີຄວາມເປັນສ່ວນຕົວໃນສ່ວນທີ່ກ່ຽວຂ້ອງກັບໂຄງການການປິ່ນປົວ ແລະການເບິ່ງແຍງສ່ວນຕົວຂອງເຂົາເຈົ້າ. ການປຶກສາຫາລື, ການໃຫ້ຄຳປຶກສາ, ການກວດກາ, ແລະການປິ່ນປົວແມ່ນຄວາມລັບ ແລະຄວນເຮັດຢ່າງພິຈາລະນາໃຫ້ຮອບຄອບ. ຄວນໃຫ້ຄວາມເປັນສ່ວນຕົວແກ່ຄົນເຈັບໃນລະຫວ່າງການເຂົ້າ

ຫ້ອງນ້ຳ, ການອາບນ້ຳ, ແລະກິດຈະກຳອື່ນໆ ທີ່ກ່ຽວກັບອະນາໄມ ສ່ວນຕົວ, ຍົກເວັ້ນຕາມຄວາມຈຳເປັນເພື່ອຄວາມປອດພັຍ ຫຼື ການ ຊ່ວຍເຫຼືອຄົນເຈັບ.

ຂໍ້ຍ່ອຍທີ 16. **ການເກັບປະຫວັດບັນທຶກເປັນຄວາມລັບ.** ຄົນເຈັບຄວນ ໄດ້ຮັບການປະກັນເຖິງການເກັບຮັກສາປະຫວັດສ່ວນຕົວແລະປະຫວັດ ການປິ່ນປົວເປັນຄວາມລັບ, ແລະສາມາດອະນຸມັດ ຫຼື ປະຕິເສດທີ່ຈະ ໃຫ້ເປີດເຜີຍຕໍ່ບຸກຄົນໃດໆ ທີ່ຢູ່ນອກສະຖານພະຍາບານ. ສຳເນົາຂອງ ປະຫວັດ ແລະຂໍ້ມູນທີ່ເປັນລາຍລັກອັກສອນຈາກບັນທຶກປະຫວັດ ຄວນມີໃຫ້ໂດຍສອດຄ່ອງກັບຂໍ້ຍ່ອຍນີ້ ແລະມາດຕາທີ 144.335. ສິດທິ ນີ້ບໍ່ນຳໃຊ້ກັບການສອບສວນເລື້ອງຮ້ອງທຸກ ແລະການກວດກາໂດຍ ກະຊວງສາທາລະນະສຸກ ຊຶ່ງຮຽກຮ້ອງໂດຍບຸກຄົນທີສາມທີ່ເປັນຜູ້ຈ່າຍ ເງິນ, ຫຼື ບໍ່ດັ່ງນັ້ນ ຕາມທີ່ກົດໝາຍກຳນົດໄວ້.

ຂໍ້ຍ່ອຍທີ 18. **ການບໍລິການຕອບຮັບ.**ຄົນເຈັບຄວນມີສິດທີ່ຈະໄດ້ຮັບ ຄຳຕອບຢ່າງທັນທີ ແລະສົມເຫດຜົນຕໍ່ຂໍ້ຂ້ອງໃຈສົງໃສ ແລະຄຳຮ້ອງຂໍ ຂອງເຂົາເຈົ້າ.

ຂໍ້ຍ່ອຍທີ 19. **ຄວາມເປັນສ່ວນຕົວຂອງບຸກຄົນ.**ຄົນເຈັບຄວນມີສິດທີ່ ຈະໄດ້ຮັບການເຄົາລົບຕໍ່ຄວາມເປັນສ່ວນຕົວຂອງເຂົາເຈົ້າ, ຄວາມເປັນ ບຸກຄົນ, ແລະລັກສະນະທາງວັດທະນະທັມທີ່ກ່ຽວຂ້ອງກັບຄວາມເປັນຢູ່

ທາງສັງຄົມ, ສາສະໜາ, ແລະທາງຈິດໃຈຂອງເຂົາເຈົ້າ. ເຈົ້າໜ້າທີ່ຂອງສະຖານພະຍາບານຄວນຈະເຄົາລົບຕໍ່ຄວາມເປັນສ່ວນຕົວຂອງຫ້ອງພັກ ຂອງຜູ້ຢູ່ອາໄສໂດຍການເຄາະປະຕູກ່ອນ ແລະຂໍອະນຸຍາດກ່ອນເຂົ້າໄປໃນຫ້ອງ, ຍົກເວັ້ນແຕ່ໃນກໍລະນີສຸກເສີນ ຫຼື ເມື່ອເປັນວ່າຈໍາເປັນຢ່າງຊັດເຈນ.

ຂໍ້ຍ່ອຍທີ 20. **ການຮ້ອງທຸກ.** ຄົນເຈັບຄວນໄດ້ຮັບການຊຸກຍູ້ ແລະຊ່ວຍເຫຼືອໃນຕະຫຼອດລະຍະເວລາຂອງການພັກຮັກສາໂຕໃນສະຖານພະຍາບານ ຫຼື ຕະຫຼອດການປິ່ນປົວ, ເພື່ອໃຫ້ເຂົ້າໃຈ ແລະນໍາໃຊ້ສິດທິຂອງເຂົາເຈົ້າໃນຖານະເປັນຄົນເຈັບ ແລະປະຊາຊົນຄົນໜຶ່ງ. ຄົນເຈັບສາມາດຮ້ອງທຸກໄດ້ ແລະແນະນໍາການປ່ຽນແປງໃນນະໂຍບາຍ ແລະການບໍລິການຕ່າງໆ ຕໍ່ເຈົ້າໜ້າທີ່ຂອງສະຖານພະຍາບານ ແລະຕໍ່ບຸກຄົນອື່ນໆ ທີ່ເຂົາເຈົ້າເຫັນສົມຄວນ, ເປັນອິດສະຫຼະຈາກການຖືກຈໍາກັດມັດແຂນຂາ, ການຖືກລົບກວນ, ການບັງຄັບ, ການຈໍາແນກ ຫຼື ການຕອບໂຕ້, ລວມເຖິງການຂົ່ມຂູ່ໃຫ້ອອກຈາກໂຮງໝໍ.ແຈ້ງການເລື້ອງຂັ້ນຕອນການຮ້ອງທຸກຂອງສະຖານພະຍາບານ ຫຼື ໂຄງການ, ເຊັ່ນດຽວກັບທີ່ຢູ່ ແລະເບີໂທຣະສັບສໍາລັບຫ້ອງການດູແລເລື້ອງຮ້ອງທຸກສໍາລັບສະຖານດູແລສຸຂະພາບ (Office of Health Facility Complaints) ແລະສູນຮ້ອງທຸກສໍາລັບບ້ານພັກຜູ້ເຖົ້າໃນພື້ນທີ່ ໂດຍສອດຄ່ອງຕາມກົດໝາຍວ່າດ້ວຍຊາວອາເມລິກັນຜູ້ສູງອາຍຸ (Older Americans Act), ມາດຕາທີ 307 (a)(12) ຄວນຖືກຕິດປະກາດໄວ້ໃນສະຖານທີ່ທີ່ເບິ່ງເຫັນໄດ້ຊັດເຈນ.

ການປະຕິບັດຕາມໂດຍສູນຜ່າຕັດຄົນເຈັບນອກໂຮງໝໍຕາມມາດຕາ 144.691 ແລະການປະຕິບັດຕາມໂດຍອົງການບ□າລຸງຮັກສາສຸຂະພາບຕ່າງໆ ຕາມມາດຕາ 62D.11 ແມ່ນຕ້ອງເປັນໄປຕາມຂໍ້ກໍານົດສໍາລັບຂັ້ນຕອນການຮ້ອງທຸກພາຍໃນທີ່ເປັນລາຍລັກອັກສອນ.

ຖ້າຫາກ ທ່ານມີຄຳຮ້ອງທຸກກ່ຽວກັບອົງການ ຫຼື ບຸກຄົນທີ່ໃຫ້ບໍລິການ ດ້ານການຜ່າຕັດຄົນເຈັບນອກ ໂຮງໝໍແກ່ທ່ານ, ທ່ານສາມາດໂທຣ, ຂຽນ, ຫຼື ໄປຢັ້ງມຢາມທີ່ຫ້ອງການດູແລເລື້ອງຮ້ອງທຸກດ້ານ ສະຖານດູແລສຸຂະພາບ, ກະຊວງສາທາລະນະສຸກຣັຖມິນນີໂຊຕາ. ທ່ານຍັງສາມາດຕິດຕໍ່ສູນຮັບເລື້ອງຮ້ອງທຸກດ້ານ ການເບິ່ງແຍງດູແລ ລະຍະຍາວໄດ້.

**Office of Health Facility Complaints**
**(ຫ້ອງການດູແລເລື້ອງຮ້ອງທຸກດ້ານສະຖານດູແລສຸຂະພາບ)**

(651) 201-4201
1-800-369-7994
ແຟກຊ໌: (651) 281-9796

**ທີ່ຢູ່ທາງໄປສະນີ:**

Minnesota Department of Health
Office ofHealth Facility Complaints
85 East Seventh Place, Suite 300
P.O. Box 64970
St. Paul, Minnesota 55164-0970

**Ombudsman for Long-Term Care**
**(ສູນດູແລເລື້ອງຮ້ອງທຸກສຳລັບການເບິ່ງແຍງລະຍະຍາວ)**

(651) 431-2555
1-800-657-3591
ແຟກຊ໌: (651) 431-7452

**ທີ່ຢູ່ທາງໄປສະນີ:**

Ombudsman for Long-TermCare
PO Box 64971
St. Paul, MN 55164-0971